ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 020 /ທຄຕລ 2021

ນະຄອນຫຼວງວຽງຈັນ, ວັນທີ: 08 FEB 2021

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ໃນນະຄອນຫຼວງວຽງຈັນ.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຄື່ອງອຸປະກອນສັນຍານເຕືອນໄພ (Alarm).

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ສັນຍານເຕືອນໄພ (Alarm) ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລຳດັບ | ລາຍການ | ຫົວໜ່ວຍ | ຈຳນວນ |
|---|---|---|---|
| 1 | ຊຸດຍີ່ຫໍ້ Maxwell Risco Lightsys Set Elegant Panel: LIGHTSYS-03 (ຮອງຮັບແບບເດີນສາຍ ແລະ ໄຮ້ສາຍ) ຮອງຮັບເຊັນເຊີໄດ້ຕາມຈຳນວນຂ້າງລຸ່ມ. | unit | 4 |
| 2 | IP Module : RW132IP0000A | unit | 4 |
| 3 | Voice Module : RP432EV00XXA | unit | 4 |
| 4 | Power Expansion Module 3A: RP128EPS000A | unit | 4 |
| 5 | PIR DT Bus with Bracket (ແບບເດີນສາຍ): RK815DTB200A | unit | 30 |
| 6 | Wired Smoke & Heat Detector (ແບບເດີນສາຍ): RWT33S86800A | unit | 55 |
| 7 | Seismic detector (ແບບເດີນສາຍ): VV600 | unit | 7 |
| 8 | Panic (ແບບເດີນສາຍ): MOELLERRSW1 | unit | 25 |
| 9 | LightSYS LCD Keypad detector (ແບບເດີນສາຍ): RP432KP000A | unit | 6 |
| 10 | Siren (ແບບເດີນສາຍ): MWA12 | unit | 8 |
| 11 | Wireless Receiver: RP432EW8000A | unit | 4 |
| 12 | Remote Control: RP128T4RC00A | unit | 8 |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **<u>ເອກະສານຊອງທີ 1 (ບໍ່ປິດຊອງ).</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ຕ້ອງມີວິຊາການສະເພາະ ແລະ ດຳເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ 2019 ແລະ ປີ 2020 (ຖ້າມີ), ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ.
2. ລະບຸປີຜະລິດສິນຄ້າ ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງອຸປະກອນດັ່ງກ່າວໃຫ້ພາກສ່ວນອື່ນ.
3. ກຳນົດຍື່ນຊອງມາດຕະຖານເຕັກນິກດ້ານໄອທີ ຈະປິດຮັບໃນວັນສຸກ ວັນທີ **19/02/2021** ເວລາ **11:00** ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

❖ **<u>ເອກະສານຊອງທີ 2 (ປິດຊອງ)</u>.**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ ແລະ ໃຫ້ມາຍື່ນໃນວັນທີ **23/02/2021 ກ່ອນເວລາ 15:00 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.
2. ບໍລິສັດຜູ້ສະໜອງຕ້ອງກຳນົດລຸ້ນ, ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.

❖ **<u>ໝາຍເຫດ:</u>** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ບໍ່ປະກອບເອກະສານຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

**ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ1:** ຊຳລະ 90% ຂອງມູນຄ່າ ພາຍໃນ 10 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງ.
- **ງວດທີ2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ປະທານຄະນະກຳມະການປະມູນ**

ແຫ່ງ ທະນາຄານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ສປປ ລາວ ນະຄອນ ຫລວງ ວຽງຈັນ

**ນັນທະລາດ ແກ້ວປະເສີດ**

ສອບຖາມລາຍລະອຽດເພີ່ມເຕີມ:

<u>ທ້າວ ສຸລີສັກ ສິນລາດຊະວົງ 020 23344556</u>

E-mail: <u>itcenter@bcel.com.la</u> (ສຳລັບສອບຖາມສະເປັກ)

- <u>bidcommittee@bcel.com.la</u>